ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຄຳມ່ວນ

ເລກທີ 588/ຈຂ
ຄຳມ່ວນ, ວັນທີ 4.4.2024

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງແລະການພັດທະນາທີ່ດິນປ່າໄມ້ທົ່ວແຂວງ ຄຳມ່ວນ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ2015;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ21 ມິຖຸນາ 2019;
- ອີງຕາມ ມະຕິ ຂອງສະພາປະຊາຊົນແຂວງຄຳມ່ວນ ຮັບຮອງເອົາຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາທີ່ດິນປ່າໄມ້ ທົ່ວແຂວງຄຳມ່ວນ ສະບັບເລກທີ 13/ສພຂ.ຄມ, ລົງວັນທີ 18 ມີນາ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້, ກວດກາທີ່ດິນປ່າໄມ້, ສົ່ງເສີມການຟື້ນຟູ, ປູກ ແລະ ຂະຫຍາຍຊັບພະຍາກອນປ່າໄມ້ຢູ່ແຂວງ ຄຳມ່ວນ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ, ເພີ່ມຄວາມປົກຫຸ້ມປ່າໄມ້, ເປັນແຫຼ່ງທ່ອງທ່ຽວ, ທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນໂດຍບໍ່ບົກແຫ້ງ ແນໃສ່ຮັບປະກັນການປົກປັກຮັກສາຄຸນນະພາບຂອງດິນ, ອາກາດ, ແຫຼ່ງນໍ້າ, ຊີວະນາໆພັນ, ສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ຄຳມ່ວນ.

### ມາດຕາ 2 ການຄຸ້ມຄອງ ແລະ ການພັດທະນາທີ່ດິນປ່າໄມ້

ການຄຸ້ມຄອງ ແລະ ການພັດທະນາທີ່ດິນປ່າໄມ້ ແມ່ນການສຳຫຼວດ, ຈັດສັນ, ການກຳນົດແບ່ງເຂດ, ວາງແຜນຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້ ໃຫ້ສອດຄ່ອງກັບທີ່ຕັ້ງ, ບົນພື້ນຖານຄວາມເປັນເອກະພາບກັບບັນດາພະແນກການ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ, ຮັບປະກັນການຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້ສາມາດຕອບສະໜອງໃຫ້ໄດ້ລາຍຮັບເຂົ້າງົບປະມານ ໂດຍສອດຄ່ອງກັບນະໂຍບາຍ, ວິທີການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ການພັດທະນາປ່າໄມ້ ໃຫ້ສົມດູນກັບລະບົບນິເວດປ່າໄມ້.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ປ່າໄມ້** ແມ່ນຊັບພະຍາກອນອັນລ້ຳຄ່າຂອງຊາດ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນໂດຍມີຕົ້ນໄມ້ນາໆຊະນິດ ທີ່ເກີດຕາມທຳມະຊາດ ຫຼື ປູກຂຶ້ນໃນເນື້ອທີ່ແຕ່ສູນຈຸດຫ້າ (0,5) ເຮັກຕາ ແລະ ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ແຕ່ຊາວສ່ວນຮ້ອຍ (20 %) ຂຶ້ນໄປ;
2. **ທີ່ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;
3. **ການເຊົ່າຫຼືສຳປະທານທີ່ດິນປ່າໄມ້** ໝາຍເຖິງ ການນຳໃຊ້ທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການປ່າໄມ້ ເຊັ່ນ: ການຟື້ນຟູປ່າ, ປູກປ່າ ແລະ ເຄື່ອງປ່າຂອງດົງ, ການທ່ອງທ່ຽວທຳມະຊາດ, ການຂຸດຄົ້ນແຮ່ທາດ ການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ ແລະ ການບໍລິການດ້ານລະບົບນິເວດປ່າໄມ້;
4. **ທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນແລະທີ່ດິນປ່າຜະລິດ** ໝາຍເຖິງ ເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ ແລະ ທີ່ດິນປ່າຜະລິດ;
5. **ທີ່ດິນປ່າຊຸດໂຊມ** ໝາຍເຖິງ ເນື້ອທີ່ດິນປ່າໄມ້ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີຕໍ່ເນື່ອງກັນ ແລະໃຊ້ເວລາຫຼາຍສິບປີ ຈຶ່ງສາມາດຟື້ນຟູດ້ວຍຕົວມັນເອງໄດ້ ຊຶ່ງຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ບໍ່ເກີນ 10 % ແລະ ບໍລິມາດໄມ້ຢືນຕົ້ນທີ່ມີຂະໜາດໜ້າຕ້າງ 10 Cm ຂຶ້ນໄປ ບໍ່ເກີນຊາວແມັດກ້ອນຕໍ່ໜຶ່ງເຮັກຕາ ($20m^3/1ha$);
6. **ທີ່ດິນປ່າປອກໂຫຼ້ນ** ໝາຍເຖິງ ເນື້ອທີ່ດິນປ່າໄມ້ທີ່ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີຕໍ່ເນື່ອງກັນ ເຮັດໃຫ້ເນື້ອທີ່ດັ່ງກ່າວປົກຫຸ້ມດ້ວຍປ່າຫຍ້າຄາ, ຫຍ້າແຝກ, ປ່າພຸ່ມຊຶ່ງຕົ້ນໄມ້ບໍ່ສາມາດຟື້ນຟູດ້ວຍຕົວມັນເອງເປັນປ່າໄມ້ໂດຍທຳມະຊາດໄດ້;
7. **ການພັດທະນາປ່າໄມ້** ໝາຍເຖິງ ການຟື້ນຟູປ່າຊຸດໂຊມ, ການປູກປ່າຄືນໃໝ່ພາຍຫຼັງການຂຸດຄົ້ນ ຫຼື ຖືກທຳລາຍ ແລະ ການນຳໃຊ້ວິທະຍາສາດເຕັກນິກອື່ນ ເພື່ອເພີ່ມຄຸນນະພາບ, ເນື້ອທີ່ ແລະ ຄວາມປົກຫຸ້ມຂອງປ່າໄມ້;
8. **ການພັດທະນາທີ່ດິນປ່າໄມ້** ໝາຍເຖິງ ການປັບປຸງຄຸນນະພາບຂອງດິນ ຈາກດິນທີ່ຊຸດໂຊມ ໃຫ້ກາຍເປັນດິນທີ່ອຸດົມສົມບູນ;
9. **ການຫັນປ່ຽນທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ ແລະ ຈຸດປະສົງອື່ນ;
10. **ການຫັນປ່ຽນທີ່ດິນປ່າໄມ້ມີລັກສະນະຖາວອນ** ໝາຍເຖິງ ການຫັນປ່ຽນທີ່ດິນປ່າໄມ້ເປັນດິນປະເພດອື່ນ ເພື່ອນຳໃຊ້ຈຸດປະສົງໃດໜຶ່ງ ທີ່ມີລັກສະນະຍາວນານ ເປັນຕົ້ນການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳຕີນເສົາສາຍສົ່ງໄຟຟ້າ, ຕີນເສົາເຄື່ອງສົ່ງສັນຍານໂທລະສັບ ຫຼື ການຈັດສັນພູມລຳເນົາ;
11. **ການຫັນປ່ຽນທີ່ດິນປ່າໄມ້ມີລັກສະນະຊົ່ວຄາວ** ໝາຍເຖິງການ ຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງທີ່ກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ທີ່ດິນທີ່ໄດ້ຫັນປ່ຽນນັ້ນ ກໍ່ຕ້ອງໄດ້ກັບຄືນມາເປັນທີ່ດິນປ່າໄມ້ເໝືອນເດີມ ເປັນຕົ້ນເຂດຂຸດຄົ້ນບໍ່ແຮ່, ເສັ້ນທາງຜ່ານເຂົ້າຫາເຂດກໍ່ສ້າງ, ສະຖານທີ່ປຸກສ້າງຊົ່ວຄາວ;
12. **ເຂດຄຸ້ມຄອງນຳໃຊ້** ໝາຍເຖິງ ເຂດດິນປ່າໄມ້ຊຶ່ງລັດຈັດສັນໃຫ້ບ້ານທີ່ຕັ້ງຢູ່ໃນ ແລະ ຕິດກັບເຂດປ່າສະຫງວນເປັນຜູ້ຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ ໂດຍໄດ້ຮັບຜົນປະໂຫຍດຕອບແທນທີ່ເໝາະສົມ, ເປັນເຂດທີ່ສາມາດດຳເນີນທຸລະກິດທ່ອງທ່ຽວທຳມະຊາດ ເກັບກູ້ເຄື່ອງປ່າ

ຂອງດົງຈາກປ່າທຳມະຊາດ, ຜະລິດກະສິກຳ, ປູກໄມ້ ແລະ ເຄື່ອງປ່າຂອງດົງຕາມທີ່ລັດຈັດສັນໃຫ້ເພື່ອສ້າງເສດຖະກິດຄອບຄົວເປັນສິນຄ້າ, ແຕ່ບໍ່ອະນຸຍາດໃຫ້ຕັດໄມ້ທຳມະຊາດເພື່ອດຳເນີນທຸລະກິດ;

13. **ປ່າໂຄກ** ໝາຍເຖິງ ປ່າໄມ້ທຳມະຊາດທີ່ບໍ່ຕຶບໜາ ແລະ ມີລະບົບນິເວດປ່າໄມ້ສະເພາະຕົວ, ຮັກສານ້ຳໃຕ້ດິນ, ຊັ້ນດິນຕື້ນ ແລະ ມີຫີນດານຕາມໜ້າດິນ. ຊະນິດພັນໄມ້ທີ່ເກີດຂຶ້ນສ່ວນໃຫຍ່ເປັນຊະນິດພັນທີ່ມີເປືອກໜາ, ລຳຕົ້ນບໍ່ໃຫຍ່ ຊຶ່ງມີຄວາມທົນທານຕໍ່ຄວາມແຫ້ງແລ້ງ ແລະ ໄຟປ່າ, ນອກຈາກນັ້ນກໍ່ຍັງເປັນຄັງອາຫານ, ຢາປົວພະຍາດ ແລະ ອື່ນໆຂອງປະຊາຊົນ;
14. **ລະບົບນິເວດ** ໝາຍເຖິງ ສາຍພົວພັນລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ.
15. **ການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້** ໝາຍເຖິງ ການປະຕິບັດພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການບໍລິການດ້ານລະບົບນິເວດປ່າໄມ້ ຊຶ່ງອາດເປັນວັດຖຸ, ເງິນ ຫຼື ອື່ນໆ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ;
16. **ບ້ານພັດທະນາປ່າໄມ້** ໝາຍເຖິງ ບ້ານທີ່ມີຄວາມເຂັ້ມແຂງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 4 ຫຼັກການໃນການຄຸ້ມຄອງ ແລະ ການພັດທະນາເຂດທີ່ດິນປ່າໄມ້**

ການຄຸ້ມຄອງ, ການປົກປັກຮັກສາ ແລະ ການພັດທະນາທີ່ດິນປ່າໄມ້ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ ຄຳມ່ວນ;
2. ຮັບປະກັນໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ແຜນຍຸດທະສາດປ່າໄມ້, ຕາມແຜນແມ່ບົດ ແລະ ແຜນການນຳໃຊ້ທີ່ດິນປ່າໄມ້ຂອງແຂວງ;
3. ຮັບປະກັນການປົກປັກຮັກສາ, ຟື້ນຟູ, ພັດທະນາທີ່ດິນປ່າໄມ້, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ສິ່ງແວດລ້ອມໃຫ້ອຸດົມສົມບູນ, ໂດຍການມີສ່ວນຮ່ວມຈາກທຸກພາກສ່ວນໃນສັງຄົມ;
4. ຮັບປະກັນຜົນປະໂຫຍດຂອງລັດ, ການຈັດຕັ້ງ ແລະ ບຸກຄົນທີ່ປົກປັກຮັກສາ, ພັດທະນາທີ່ດິນປ່າໄມ້ຕາມລະບຽບກົດໝາຍ;
5. ຮັບປະກັນການນຳໃຊ້ທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນ, ປະຢັດ, ຍືນຍົງ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;
6. ສົມທົບຍຸດທະສາດການພັດທະນາທີ່ດິນປ່າໄມ້ຂອງແຂວງ ກໍ່ຄືຂອງປະເທດ ໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ອົງການຈັດຕັ້ງສັງຄົມທີ່ຄຸ້ມຄອງ ແລະ ພັດທະນາທີ່ດິນປ່າໄມ້ໃນແຂວງ ຄຳມ່ວນ.

## ໝວດທີ 2
## ການຄຸ້ມຄອງທີ່ດິນປ່າໄມ້

**ມາດຕາ 6 ການຄຸ້ມຄອງ ທີ່ດິນປ່າໄມ້**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຄຸ້ມຄອງທີ່ດິນປ່າໄມ້ ໂດຍກົງຕາມການມອບໝາຍຂອງອົງການປົກຄອງຂັ້ນແຂວງ ໂດຍສ້າງກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງຂັ້ນເມືອງ, ບ້ານ ແລະ ທຸກພາກສ່ວນໃນສັງຄົມຄົ້ນຄວ້ານະໂຍບາຍ, ລະບຽບການ,ວິທີການ ແລະ ມາດຕະການຕ່າງໆ.

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ກຳນົດປະເພດດິນປ່າໄມ້ປະເພດຕ່າງໆ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງເມືອງ, ໃນການຄົ້ນຄວ້າວາງລະບຽບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນປະເພດດັ່ງກ່າວ ໃຫ້ສົມດຸນກັບລະບົບນິເວດປ່າໄມ້ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລ້ວນຳສະເໜີຕໍ່ ສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 7 ການສຳຫຼວດທີ່ດິນປ່າໄມ້**

ກ. ການສຳຫຼວດທີ່ດິນປ່າໄມ້ ເພື່ອກຳນົດເນື້ອທີ່ດິນປ່າໄມ້ປະເພດຕ່າງໆ ທັງໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ກຳນົດເຂດປູກໄມ້ ແລະ ຟື້ນຟູປ່າແນ່ໃສ່ປົກປັກຮັກສາສິ່ງແວດລ້ອມ, ຮັກສາລະ ບົບນິເວດປ່າໄມ້ໃຫ້ມີຄວາມຍືນຍົງ ແລະ ເພີ່ມຄວາມປົກຫຸ້ມປ່າໄມ້ ໃຫ້ໄດ້ເຈັດສິບສ່ວນຮ້ອຍ (70%) ຂອງເນື້ອທີ່ທົ່ວແຂວງ, ກຳນົດເຂດອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ເພື່ອປູກປ່າໄມ້ ແລະ ເຄື່ອງປ່າຂອງດົງ ພາຍໃນແຂວງ.

ຂ. ຂັ້ນຕອນການສຳຫຼວດທີ່ດິນປ່າໄມ້ຕ້ອງດຳເນີນດັ່ງນີ້:

1. ເກັບກຳຂໍ້ມູນທີ່ດິນປ່າໄມ້, ຕີລາຄາສະພາບທີ່ດິນປ່າໄມ້ ແລະ ການປ່ຽນແປງປະເພດການນຳໃຊ້ທີ່ດິນປ່າໄມ້;
2. ເກັບກຳຂໍ້ມູນການນຳໃຊ້ທີ່ດິນປ່າໄມ້;
3. ກຳນົດເຂດ ແລະ ວາງແຜນການນຳໃຊ້ທີ່ດິນປ່າໄມ້;
4. ສ້າງແຜນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້;
5. ຂຶ້ນທະບຽນທີ່ດິນປ່າໄມ້;
6. ປະຕິບັດວຽກງານອື່ນໆ.

ຄ. ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການປະສານສົມທົບ ກັບອົງການຈັດຕັ້ງທີ່ກ່ຽວຂ້ອງໃນການສຳຫຼວດທີ່ດິນປ່າໄມ້ ເພື່ອວາງແຜນຈັດສັນ, ການຄຸ້ມຄອງ, ປົກປັກຮັກສາ, ແຜນພັດທະນາ ແລະ ນຳໃຊ້ແບບຍືນຍົງ.

**ມາດຕາ 8 ປະເພດທີ່ດິນປ່າໄມ້**

ກ. ທີ່ດິນປ່າໄມ້ຢູ່ໃນແຂວງຄຳມ່ວນ ແບ່ງອອກເປັນສາມປະເພດຄື:

1. ທີ່ດິນປ່າປ້ອງກັນ;
2. ທີ່ດິນປ່າສະຫງວນ;
3. ທີ່ດິນປ່າຜະລິດ.

ໃນສາມປະເພດທີ່ດິນປ່າໄມ້ນີ້ ກວມເອົາທີ່ດິນປ່າຟື້ນຟູ, ປ່າໂຄກ, ທີ່ດິນປ່າຊຸດໂຊມ ຫຼື ທີ່ດິນປ່າປອກໂຫຼ້ນ ແລະ ທີ່ດິນປ່າຊົມໃຊ້ຂອງບ້ານ.

ຂ. ປ່າໄມ້ໃນຂອບເຂດຂອງບ້ານຮັບຜິດຊອບ ແບ່ງອອກເປັນສາມປະເພດຄື:

1. ປ່າປ້ອງກັນລວມມີ: ປ່າຍອດນ້ຳ, ປ່າແຄມນ້ຳ ແລະ ປ່າແຄມທາງ;
2. ປ່າສະຫງວນລວມມີ: ປ່າສັກສິດ ແລະ ປ່າຊ້າ;
3. ປ່າຜະລິດລວມມີ: ປ່າຊົມໃຊ້ຂອງບ້ານ ຖືວ່າເປັນທີ່ດິນປ່າໄມ້ທີ່ຈະຕ້ອງໄດ້ຈັດສັນໄປຕາມແຜນຈັດສັນທີ່ດິນປ່າໄມ້.

ມາດຕາ 9 ທີ່ຕັ້ງ, ຂອບເຂດຂອງປ່າໄມ້ ແຕ່ລະປະເພດປ່າ

1. **ກຳນົດປ່າອຸທິຍານແຫ່ງຊາດ 2 ແຫ່ງ = 458.271,00ເຮັກຕາ.**

| ລ/ດ | ຊື່ອຸທິຍານ ແຫ່ງຊາດ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ນາກາຍ- ນ້ຳເທີນ | 364.150 | ນາກາຍ<br>ຍົມມະລາດ<br>ບົວລະພາ | 105°09'37,3"<br>105°38'36,4"<br>105°25'30,7"<br>104°47'21,4" | 18°23'21,3"<br>17°59'18,4"<br>17°35'24,9"<br>18°01'48,4" | 36/ນຍ<br>15/2/2019<br>21 ບ້ານ |
| 2 | ຫີນໜາມໜໍ່ | 94.121 | ບົວລະພາ | 105°46'27,3"<br>106°57'37,2"<br>105°08'36,7"<br>105°49'31,7" | 17°38'15,5"<br>17°30'32,2"<br>17°15'01"<br>17°22'03,9" | 70/ນຍ<br>15/01/2020<br>19 ບ້ານ |

2. **ກຳນົດປ່າສະຫງວນແຫ່ງຊາດ 2 ແຫ່ງ = 203.863,00ເຮັກຕາ.**

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ພູຫີນປູນ | 150.000 | ທ່າແຂກ<br>ຍົມມະລາດ<br>ມະຫາໄຊ<br>ນາກາຍ<br>ຫີນບູນ<br>ຄູນຄຳ | 104°25'00"<br>105°10'00"<br>104°39'52,7"<br>104°54'52,3" | 17°27'00"<br>18°05'00"<br>17°45'57,6"<br>17°49'56,5" | 164/ລບ<br>28/10/199<br>3<br>88 ບ້ານ |
| 2 | ຊຸນເຊ-ໜອງ ມ້າ | 53.863,00 | ບົວລະພາ | 106°17' 47"<br>106°23' 24"<br>106°25' 53"<br>106°06' 02" | 17°18' 21"<br>17°00' 47"<br>17°01' 38"<br>17°06' 08" | 05/ນຍ<br>6/01/2021<br>10 ບ້ານ |

3. **ກຳນົດປ່າສະຫງວນຂອງແຂວງມີ 3 ແຫ່ງ = 22.165,97 ເຮັກຕາ.**

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ນ້ຳສະນາມ- ພູຜາມ່ານ | 7.503,97 | ຄູນຄຳ | 104°31'31.1"<br>104°31'31.6"<br>104°30'32.3"<br>104°25'35.4" | 18°13'39.2"<br>18°05'31.6"<br>18°10'02.0"<br>18°10'04.5" | 04/ຈຂ<br>28/05/2021 |
| 2 | ຜາຖ້ຳບົ້ງ | 12.000 | ບົວລະພາ<br>ມະຫາໄຊ | 105°41'29.3"<br>105°41'43.3" | 17°19'34.8"<br>17°12'58.0" | 74/ຈຂ<br>28/01/2004 |

| | | | | | | |
|---|---|---|---|---|---|---|
| | | | | 105°46'43.1"<br>105°40'57.7" | 17°21'26.8"<br>17°16'01.1" | 11 ບ້ານ |
| 3 | ພູຫ້ວຍຊຽງ,ພູທາດນ້ຳຈັ້ກົ້ | 2.662 | ຍົມມະລາດ | 105°05'13.1"<br>105°07'55.1"<br>105°07' 5,5"<br>105°08'46.7" | 17°41'00.9"<br>17°38'58.7"<br>17°41'53.5"<br>17°41'01.0" | 887/ຈຂ<br>19/7/2009<br>4 ບ້ານ |

**4. ກຳນົດປ່າສະຫງວນຂອງເມືອງມີ8ແຫ່ງ = 769,26 ເຮັກຕາ.**

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ ຈຸດພົກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ໜອງເຈົ້າ | 51.92 | ໜອງບົກ | 104°54'56.7"<br>104°55'03.2"<br>104°55'07.3"<br>104°54'45.4" | 17°05' 55.0"<br>17°07' 17.4"<br>17°07'40.0"<br>17°07' 34.5" | ບ້ານປຶ້ງກົ່ວ |
| 2 | ໜອງສິມ | 28.54 | ໜອງບົກ | 104°47'09.9"<br>104°47'11.9"<br>104°47'12.6"<br>104°47'05.9" | 17°05' 18.5"<br>17°05' 12.5"<br>17°05' 16.4"<br>17°05' 15.5" | ບ້ານໜອງບົກ |
| 3 | ໜອງກະຍອຍ | 15 | ຍົມມະລາດ | 105°17'21.4"<br>105°17'31.3"<br>105°17'31.7"<br>105°47'46.2" | 17°29' 54.0"<br>17°29'47.2"<br>17°29'59.8"<br>17°29' 53.8" | ບ້ານໂພແສດ |
| 4 | ຫ້ວຍນ້ຳຖ້ຳ | 48 | ຍົມມະລາດ | 105°13'23.4"<br>105°13'44.9"<br>105°13'44.9"<br>105°14'08.1" | 17°31' 06.0"<br>17°30'54.6"<br>17°31'19.0"<br>17°31' 10.4" | ບ້ານນາກະຕັງ |
| 5 | ພົດສີໄຄ | 17 | ຍົມມະລາດ | 105°07' .334"<br>105°07'38.6"<br>105°07'38.5"<br>105°07'46.8" | 17°31' 12"<br>17°31' 01.9"<br>17°31' 21.9"<br>17°31'13.3" | ບ້ານພົດສີໄຄ |
| 6 | ຜາຫອຍ | 111 | ໄຊບົວທອງ | 105°25' 00"<br>105°24'49.6"<br>105°24' 22"<br>105°24'22.0" | 17°49' 00"<br>17°10' 15.3"<br>17°09' 44.0"<br>17°10' 12.1" | ບ້ານຜາ ຫອຍ<br>ບ້ານນາຂາມ |
| 7 | ຖ້ຳນ້ຳລອດ | 42 | ໄຊບົວທອງ | 105°24' 13"<br>105°24'01.9"<br>105°23'41.3" | 17°12' 39.8"<br>17°10' 15.3"<br>17°12' 27.2" | ບ້ານປ່າ ກ້ອຍດົງ<br>ບ້ານນາຂາມ |

| | | | | | | |
|---|---|---|---|---|---|---|
| | | | | 105°23'32.9" | 17°12' 41.8" | |
| 8 | ຜານ້ຳສ້າງ | 455,8 | ໄຊບົວທອງ | 105°31' 37.8"<br>105°32'03.5"<br>105°32'03.5"<br>105°31'43.5" | 17°05' 40.5"<br>17°05' 11.7"<br>17°05' 25.4"<br>17°05' 19.7" | ບ້ານໜອງຜື |

**5. ກຳນົດປ່າປ້ອງກັນແຫ່ງຊາດມີ 2 ແຫ່ງ = 69.302,47 ເຮັກຕາ.**

| ລ/ດ | ຊື່ປ່າສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ບ້ານ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ພູໄຂ | 28.813,4<br>7 | ຄູນຄຳ<br>ນາກາຍ | 104°35'28.4"<br>104°47'49.8"<br>104°46'42.8"<br>104°38'02.8" | 18°11'44.5"<br>17°56'53.8"<br>18°05'35.6"<br>18°03'42.9" | 15ບ້ານ<br>03/ຈຂ<br>28/5/2021 |
| 2 | ພູຫຼວງ-ພູເຂົານົກ | 40.489,00 | ບົວລະພາ | 105°45'35.8"<br>106°22'02.3"<br>105°54'33.6"<br>105°51'01.9" | 17°24'15.19"<br>17°09'35.1"<br>17°19'04"<br>17°13'57.8" | 343/ລບ<br>25/18/2022<br>11ບ້ານ |

**6. ກຳນົດປ່າປ້ອງກັນຂອງແຂວງ 7 ແຫ່ງ= 97.144,90ເຮັກຕາ.**

| ລ/ດ | ຊື່ປ່າ ສະຫງວນ | ເນື້ອທີ່ (ເຮັກຕາ) | ຈຸດທີ່ຕັ້ງ (ເມືອງ) | ຂອບເຂດທີ່ຕັ້ງ | | ສະຖານທີ່ ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ລາດເດື່ອ-ພູ ແຜນ | 39.601,9 | ບົວລະພາ<br>ຍົມມະລາດ<br>ມະຫາໄຊ | 105°32'32.4"<br>105°28'48.8"<br>105°43'36.4"<br>105°14'08.4" | 17°28'46.8"<br>17°21'13.5"<br>17°24'26.1"<br>17°23'47.1" | 05/ຈຂ<br>28/5/2021<br>32 ບ້ານ |
| 2 | ພູນົກກົກ | 10.918 | ຄູນຄຳ | 104°22'57.7"<br>104°50'22.3"<br>104°28'27.2"<br>105°40'57.7" | 17°24'32.4"<br>18°08'45.8"<br>18°04'57.1"<br>17°16'01.1" | 887/ຈຂ<br>19/7/2009<br>4ບ້ານ: |
| 3 | ພູງູ | 7.913 | ຫີນບູນ<br>ຄູນຄຳ | 104°21'26.1"<br>104°24'21.5"<br>104°26'49.1"<br>104°28'54.1" | 17°58'56.7"<br>17°53'59.9"<br>17°54'01.8"<br>17°49'22.6" | 887/ຈຂ<br>19/7/2009<br>14 ບ້ານ |
| 4 | ນ້ຳອິນ-ພູ | 16.898 | ບົວລະພາ | 105°25'26.7"<br>105°35' 13" | 17°32'47.0"<br>17°30'41.9" | 2454/ຈຂ |

| | | | | | | |
|---|---|---|---|---|---|---|
| | ເຫຼັກໄຟ | | ຍົມມະລາດ | 105°34'57.8"<br>105°43'57.6" | 17°35'00.7"<br>17°31'57.4" | 27/11/2014<br>18 ບ້ານ |
| 5 | ຜາສະຫງ່າຜາຊ້າງ | 99 | ຄູນຄຳ | 104°26'41.0"<br>104°26'47.8"<br>104°26'17.8"<br>104°26'23.9" | 17°55'38.4"<br>17°56'06.5"<br>17°56'03.9"<br>17°56'19.8" | 887/ຈຂ<br>19/7/2009<br>ບ້ານຜາຊ້າງ |
| 6 | ພູຂຽວ | 18.519 | ທ່າແຂກ<br>ມະຫາໄຊ<br>ເຊບັ້ງໄຟ | 104°54'00.8"<br>105°01'07.9"<br>105°09' 05"<br>105°01'07.4" | 17°24'44.5"<br>17°20'14.2"<br>17°24'45.8"<br>17°27'01.9" | 887/ຈຂ<br>19/7/2009<br>19 ບ້ານ |
| 7 | ນ້ຳຈົ້ກົ້ | 3.196 | ຍົມມະລາດ<br>ນາກາຍ | 105°05'13.1"<br>105°07'55.1"<br>105°07'55,5"<br>105°08'46.7" | 17°41'00.9"<br>17°38'58.7"<br>17°41'53.5"<br>17°41'01.0" | 887/ຈຂ<br>19/7/2009<br>4 ບ້ານ |

7. **ກຳນົດປ່າຜະລິດແຫ່ງຊາດ2 ແຫ່ງ: 252.822,00 ເຮັກຕາ. (ອີງຕາມດຳລັດເລກທີ 27/ນຍ, ລົງວັນທີ 8 ກຸມພາ 2006).**

| ລ/ດ | ຊື່ປ່າຜະລິດ | ເນື້ອທີ່ (ຮຕ) | ທີ່ຕັ້ງ | ຂອບເຂດທີ່ຕັ້ງ | | ສະຖານທີ່ຈຸດພິກັດ |
|---|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ | |
| 1 | ດົງພູຊອຍ | 147.406 | ຄຳມ່ວນ | 105°01'00"<br>105°34'00" | 17°02'30"<br>17°22'30" | 78 ບ້ານ |
| 2 | ນາກະທິງ-ໜອງກະປາດ | 105.416 | ຄຳມ່ວນ | 105° 26'25"<br>106° 26'25" | 17° 02'00"<br>17° 20'00" | 49 ບ້ານ |

- **ສັງລວມເນື້ອທີ່ປ່າໄມ້ທົ່ວແຂວງ ຄຳມ່ວນ.**

| ລ/ດ | ຊື່ປະເພດປ່າ | ຈຳນວນແຫ່ງ | ເນື້ອທີ່(ເຮັກຕາ) | ໝາຍເຫດ |
|---|---|---|---|---|
| 1. | ອຸທິຍານແຫ່ງຊາດ | 2 | 458.271,00 | |
| 2. | ປ່າສະຫງວນແຫ່ງຊາດ | 2 | 203.863,00 | |
| 3. | ປ່າສະຫງວນຂອງແຂວງ | 3 | 22.165,97 | |
| 4. | ປ່າສະຫງວນຂອງເມືອງ | 8 | 769,26 | |
| 5. | ປ່າປ້ອງກັນແຫ່ງຊາດ | 2 | 69.302,47 | |
| 6. | ປ່າປ້ອງກັນຂອງແຂວງ | 7 | 97.144,90 | |
| 7. | ແຫຼ່ງແກ່ນພັນ | 5 | 600,38 | |
| 8. | ປ່າຜະລິດແຫ່ງຊາດ | 2 | 252.822,00 | |

| | | | | |
|---|---|---|---|---|
| 9. | ເຂດອະນຸລັກສັດ | 1 | 4.814,00 | |
| 10. | ປ່າຜະລິດບໍລິສັດພັດທະນາປ່າໄມ້ຊາວບ້ານ | 1 | 17.096,19 | |
| 11. | ປ່າປູກ | | 31.646,74 | |
| 12. | ປ່ານອກ3 ປະເພດປ່າ | | 86.039,54 | |
| ລວມທັງໝົດ: **1.244.535,45ເຮັກຕາ.** | | | | |

## ໝວດທີ 3
## ການພັດທະນາທີ່ດິນປ່າໄມ້

### ມາດຕາ 10 ການພັດທະນາທີ່ດິນປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາທີ່ດິນປ່າໄມ້ ໂດຍສ້າງກົນໄກປະສານງານ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາທີ່ດິນປ່າໄມ້ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການ ກ່ຽວກັບການຮັກສາປັບປຸງ ແລະ ຟື້ນຟູທີ່ດິນຢູ່ໃນສະພາບດີຂຶ້ນ, ມີມູນຄ່າເພີ່ມ ແລະ ສົມດຸນກັບລະບົບນິເວດປ່າໄມ້, ການພັດທະນາທີ່ດິນປ່າໄມ້ມີກິດຈະການ ແລະ ເນື້ອໃນລະອຽດດັ່ງນີ້:

1. ການຟື້ນຟູລະບົບນິເວດປ່າໄມ້ ແລະ ຊີວະນານາພັນ;
2. ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ;
3. ການພັດທະນາຊີວິດການເປັນຢູ່;
4. ການສ້າງບ້ານພັດທະນາປ່າໄມ້;
5. ການທ່ອງທ່ຽວແບບອະນຸລັກ;
6. ການສຶກສາຄົ້ນຄວ້າ;
7. ລະບົບຂໍ້ມູນຂ່າວສານທີ່ດິນປ່າໄມ້.

### ມາດຕາ 11 ການຟື້ນຟູລະບົບນິເວດປ່າໄມ້ ແລະ ຊີວະນານາພັນ

ອົງການຄຸ້ມຄອງທີ່ດິນປ່າໄມ້ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສ້າງລະບົບການຟື້ນຟູລະບົບນິເວດປ່າໄມ້ແລະຊີວະນານາພັນ, ກຳນົດແລະການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້ ທີ່ຖືກຜົນກະທົບຈາກໂຄງການລົງທຶນແລະໂຄງການພັດທະນາເປັນຕົ້ນການຟື້ນຟູຖິ່ນທີ່ຢູ່ອາໄສຂອງສັດປ່າທີ່ໃກ້ຈະສູນພັນ, ການເຄື່ອນຍ້າຍຫຼືປ່ອຍສັດປ່າທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດແລະໂຄງການຕ່າງໆຄືນສູ່ທຳມະຊາດຕາມລະບຽບການແລະລຳດັບມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊີວະນານາພັນ.

### ມາດຕາ 12 ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ

ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ ໃຫ້ປະຕິບັດດັ່ງນີ້:

1. ກຳນົດເຂດຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມຢູ່ໃນທີ່ດິນປ່າໄມ້;

2. ກຳນົດຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງທີ່ເໝາະສົມກັບລະບົບນິເວດຂອງພື້ນທີ່ປ່າດັ່ງກ່າວ;
3. ສ້າງເປັນແຜນການ ຫຼື ໂຄງການຟື້ນຟູປ່າໄມ້ ຕິດພັນກັບກິດຈະກຳສົ່ງເສີມການສ້າງລາຍຮັບ ໃຫ້ແກ່ປະຊາຊົນທີ່ຕັ້ງພູມລຳເນົາຢູ່ໃນ ແລະ ຕິດກັບທີ່ດິນປ່າໄມ້;
4. ຈັດຕັ້ງປະຕິບັດຄຸ້ມຄອງ ແລະ ປົວລະບັດຮັກສາຢ່າງເຂັ້ມງວດ;
5. ຂຶ້ນທະບຽນເປັນປ່າປູກ ແລະ ຟື້ນຟູຕາມລະບຽບການ;
6. ປະຕິບັດຄຳແນະນຳ ກ່ຽວກັບການນຳໃຊ້ໄມ້ປູກ ແລະ ຜົນປະໂຫຍດການປູກ ຫຼື ຟື້ນຟູທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກຢ່າງເຂັ້ມງວດ.

### ມາດຕາ 13 ການດຳລົງຊີວິດຕິດພັນກັບການພັດທະນາທີ່ດິນປ່າໄມ້

ອົງການຄຸ້ມຄອງທີ່ດິນປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງຊຸກຍູ້ ແລະ ສົ່ງເສີມການພັດທະນາຊີວິດການເປັນຢູ່ ຂອງປະຊາຊົນທີ່ຕັ້ງພູມລຳເນົາຢູ່ໃນ ແລະ ຕິດກັບເຂດທີ່ດິນປ່າໄມ້ໃຫ້ມີຊີ ວິດການເປັນຢູ່ທີ່ດີຂຶ້ນ ແລະ ຢຸດເຊົາການຖາງປ່າເຮັດໄຮ່, ການບຸກລຸກຖາງປ່າທີ່ບໍ່ຖືກຕ້ອງ ຕາມລະບຽບການ ເພື່ອຫັນມາເຮັດອາຊີບຄົງທີ່ ດ້ວຍການຈັດສັນດິນທີ່ຢູ່ອາໄສ ແລະ ເຂດທຳການຜະລິດແບບຄົງທີ່, ຊຸກຍູ້, ສົ່ງເສີມການຜະລິດເປັນສິນຄ້າ ແລະສ້າງເສດຖະກິດຮ່ວມມີຮູບແບບຕ່າງໆ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນການປູກຝັງກະສິກຳ, ລ້ຽງສັດ, ປະມົງ, ປູກຕົ້ນໄມ້, ເຄື່ອງປ່າຂອງດົງ, ຫັດຖະກຳ ແລະ ການບໍລິການອື່ນ.

ອົງການຄຸ້ມຄອງທີ່ດິນປ່າໄມ້ສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການສ້າງ ແລະ ສົ່ງເສີມການຈັດຕັ້ງປະຕິບັດແຜນພັດທະນາຊີວິດການເປັນຢູ່ ຂອງປະຊາຊົນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນຈັດສັນປ່າສະຫງວນ ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງທ້ອງຖິ່ນໃນແຕ່ລະໄລຍະ.

### ມາດຕາ 14 ການສ້າງບ້ານພັດທະນາປ່າໄມ້

ການສ້າງບ້ານພັດທະນາປ່າໄມ້ ແມ່ນການສ້າງໃຫ້ບ້ານມີຄວາມເຂັ້ມແຂງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ, ການພັດທະນາປ່າໄມ້ມີເງື່ອນໄຂດັ່ງນີ້:

1. ປະຊາຊົນພາຍໃນບ້ານ ມີສະຕິເຄົາລົບປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້;
2. ມີແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ໄດ້ຜ່ານການຮັບຮອງຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
3. ມີສັນຍາອະນຸລັກປ່າໄມ້;
4. ມີລະບົບການຜະລິດກະສິກຳ ແລະ ປ່າໄມ້ແບບປະສົມປະສານທີ່ຍືນຍົງ;
5. ເປັນບ້ານທີ່ມີການປູກ ແລະ ຂະຫຍາຍປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ແລະ ເພີ່ມຄວາມປົກຫຸ້ມຂອງປ່າໄມ້.

### ມາດຕາ 15 ການທ່ອງທ່ຽວແບບອະນຸລັກ

ອົງການຄຸ້ມຄອງທີ່ດິນປ່າໄມ້ ເປັນເຈົ້າການປະສານສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດຳເນີນການສຳຫຼວດ, ວາງແຜນຈັດສັນ, ຄຸ້ມຄອງ ແລະ ພັດທະນາການທ່ອງທ່ຽວ

ພ້ອມທັງດຳເນີນການຕິດຕາມ ແລະ ກວດກາກິດຈະການທ່ອງທ່ຽວແບບອະນຸລັກ ໃນທີ່ດິນປ່າໄມ້ ເພື່ອປະເມີນຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 16 ການສຶກສາຄົ້ນຄວ້າ**

ອົງການຄຸ້ມຄອງທີ່ດິນປ່າໄມ້ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດຳເນີນການສຶກສາຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ເຊັ່ນ: ແມງໄມ້, ພັນສັດນ້ຳ, ສັດປ່າ ແລະ ພັນພືດທີ່ໃກ້ຈະສູນພັນ, ທໍລະນີສາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ມອນສານກາກບອນປ່າໄມ້ ແລະ ອື່ນໆ ໃນທີ່ດິນປ່າໄມ້ ຊຶ່ງຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ລາຍງານຜົນການສຶກສາຄົ້ນຄວ້າ ຢ່າງເປັນລາຍລັກອັກສອນ ໃຫ້ອົງການຄຸ້ມຄອງທີ່ດິນປ່າໄມ້ ພາຍໃນເວລາຫົກສິບວັນ ນັບແຕ່ວັນການສຶກສາຄົ້ນຄວ້າສຳເລັດ ເປັນຕົ້ນໄປ.

**ມາດຕາ 17 ລະບົບຂໍ້ມູນຂ່າວສານທີ່ດິນປ່າໄມ້**

ອົງການຄຸ້ມຄອງທີ່ດິນປ່າໄມ້ເປັນເຈົ້າການສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ລະບົບຂໍ້ມູນຂ່າວສານທີ່ດິນປ່າໄມ້ ໂດຍເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານປ່າໄມ້ຂອງພາກພື້ນ ແລະ ສາກົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບຂໍ້ມູນຂ່າວສານທີ່ດິນປ່າໄມ້ ໂດຍສອງຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການນຳໃຊ້ ທີ່ດິນປ່າໄມ້

**ມາດຕາ 18 ການນຳໃຊ້ທີ່ດິນປ່າໄມ້**

ລັດອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ການຈັດຕັ້ງສັງຄົມນຳໃຊ້ທີ່ດິນປ່າໄມ້ທີ່ເປັນທີ່ດິນປອກໂຫຼ້ນ ຫຼື ປ່າຊຸດໂຊມ ຢ່າງຖືກຕ້ອງຕາມເປົ້າໝາຍ, ຍາວນານ, ມີປະສິດທິຜົນ ແລະ ກໍ່ມີສິດເຊົ່າ ຫຼື ສຳປະທານນຳລັດ, ສຳລັບການອະນຸມັດເນື້ອທີ່ດິນປ່າໄມ້ ໃຫ້ການຈັດຕັ້ງນຳໃຊ້ ແມ່ນອີງໃສ່ທ່າແຮງ ແລະ ຄວາມສາມາດຕົວຈິງໃນການຜະລິດ ໂດຍສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 19 ການນຳໃຊ້ທີ່ດິນປ່າໄມ້ຕາມປະເພນີ**

ການຊົມໃຊ້ທີ່ດິນປ່າໄມ້ທີ່ເຄີຍປະຕິບັດກັນມາ ໂດຍສອດຄ່ອງກັບລະບຽບກົດໝາຍ, ລັດອະນຸຍາດເພື່ອຊົມໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດລວມຂອງບ້ານ, ແຕ່ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ ແລະ ບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງບຸກຄົນ ຫຼື ການຈັດຕັ້ງອື່ນໆ, ການຊົມໃຊ້ທີ່ດິນປ່າໄມ້ຕາມປະເພນີ ຕ້ອງປະຕິບັດຕາມແຜນຈັດສັນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍປ່າໄມ້.

**ມາດຕາ 20 ການຂຶ້ນທະບຽນອອກໃບຕາດິນຢູ່ໃນຂອບເຂດທີ່ດິນປ່າໄມ້**

ບ້ານທີ່ຕັ້ງພູມລຳເນົາຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການປະກາດສ້າງຕັ້ງປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຂອງລັດຖະບານນັ້ນ ໂດຍຫຼັກການສາມາດອອກໃບຕາດິນໃຫ້ບຸກຄົນ ຫຼື ຄອບຄົວສະເພາະແຕ່ດິນປຸກສ້າງ, ດິນກະສິກຳຖາວອນ ເຊັ່ນ: ດິນນາເດີມ, ດິນສວນ ແລະ ດິນປຸກສ້າງທີ່ໄດ້ຜ່ານການຈັດສັນການ ນຳ

ໃຊ້ທີ່ດິນ ແລະ ປ່າໄມ້ຈາກພາກສ່ວນທີ່ກ່ຽວຂ້ອງ, ສ່ວນດິນແຮໄວ້ຂອງບ້ານ, ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ອົງການປົກຄອງບ້ານ ເພື່ອນຳໃຊ້ເຂົ້າໃນການພັດທະນາຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານ.

## ໝວດທີ 5
## ການເຊົ່າ, ສຳປະທານ ແລະ ການຫັນປ່ຽນ ທີ່ດິນປ່າໄມ້

### ມາດຕາ 21 ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການທ່ອງທ່ຽວທຳມະຊາດ

ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອກິດຈະການການທ່ອງທ່ຽວທຳມະຊາດ ໃນເຂດທີ່ດິນປ່າໄມ້ສາມາດດຳເນີນໄດ້ໃນຂອບເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງແຂວງ.

ສຳລັບການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອກິດຈະການທ່ອງທ່ຽວທາງທຳມະຊາດໃນປ່າປ້ອງກັນ, ປ່າສະຫງວນຂັ້ນແຂວງ ແລະ ຂັ້ນເມືອງ ສາມາດດຳເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກອົງການປົກຄອງຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ແຂວງໂດຍການເຫັນດີເປັນເອກະພາບ ກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ອົງການປົກຄອງເມືອງ, ຜູ້ເຊົ່າ ຫຼື ສຳປະທານ ຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບການທີ່ໄດ້ກຳນົດໄວ້.

### ມາດຕາ 22 ການເກັບຄ່າທຳນຽມການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການທ່ອງທ່ຽວທຳມະຊາດ

ການເກັບຄ່າທຳນຽມການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການທ່ອງທ່ຽວທຳມະຊາດ ໃຫ້ປະຕິບັດດັ່ງນີ້:

| ລ/ດ | ເນື້ອໃນເອກະສານ | ລາຄາຕໍ່ຫົວໜ່ວຍກີບ/ເຮັກຕາ/ປີ | ໝາຍເຫດ |
|---|---|---|---|
| 1 | ໃບອະນຸຍາດດຳເນີນກິດຈະການທ່ອງທ່ຽວທຳມະຊາດໃນດິນປ່າໄມ້ | 5.000 | |

### ມາດຕາ 23 ການຫັນປ່ຽນ ປະເພດທີ່ດິນປ່າໄມ້

ການຫັນປ່ຽນທີ່ດິນປ່າໄມ້ ໄປເປັນດິນປະເພດອື່ນ ຈະດຳເນີນໄດ້ກໍ່ຕໍ່ເມື່ອຫາກມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນນຳໃຊ້ທີ່ດິນຂອງທ້ອງຖິ່ນ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ແລະ ມີຜົນກະທົບທາງລົບໜ້ອຍທີ່ສຸດ ຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ການຫັນປ່ຽນດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດຕົກລົງ ຕາມມາດຕາ 24 ຂອງຂໍ້ຕົກລົງສະບັບນີ້;

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ຫັນປ່ຽນປະເພດທີ່ດິນປ່າໄມ້ ຕ້ອງໄດ້ຮັບຜິດຊອບຈ່າຍຄ່າບໍລິການທາງດ້ານວິຊາການ, ຄ່າທຳນຽມການຫັນປ່ຽນທີ່ດິນປ່າໄມ້ ຕາມລະບຽບການ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 24 ອົງການທີ່ມີສິດໃນການຫັນປ່ຽນທີ່ດິນປ່າໄມ້

ສະພາປະຊາຊົນຂັ້ນແຂວງ ຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ເປັນດິນປະເພດອື່ນ ທີ່ແຂວງຄຸ້ມຄອງ

ຕາມການສະເໜີຂອງອົງການປົກຄອງແຂວງດັ່ງນີ້:

1. ການຫັນປ່ຽນທີ່ດິນປ່າປ້ອງກັນ, ປ່າສະຫງວນຂັ້ນບ້ານ;
2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງ ເນື້ອທີ່ຕໍ່າກວ່າ 100 ເຮັກຕາ ຕໍ່ໜຶ່ງກິດຈະການເທົ່ານັ້ນ;
3. ການຫັນປ່ຽນທີ່ດິນປ່າປອກໄຊ້ນ ເນື້ອທີ່ຕໍ່າກວ່າ 200 ເຮັກຕາຕໍ່ໜຶ່ງກິດຈະການເທົ່ານັ້ນ.

**ມາດຕາ 25 ການເກັບຄ່າທຳນຽມ ແລະ ຄ່າບໍລິການໃນການຫັນປ່ຽນທີ່ດິນປ່າໄມ້.**

ການເກັບຄ່າທຳນຽມ ແລະ ຄ່າບໍລິການທາງດ້ານວິຊາການ, ການສຳຫລວດ, ພັນທະຟື້ນຟູປ່າ ແລະປູກໄມ້ທົດແທນຄືນຈາກການຫັນປ່ຽນທີ່ດິນປ່າໄມ້ ໃຫ້ປະຕິບັດດັ່ງນີ້:

| ລ/ດ | ເນື້ອໃນເອກະສານ | ຄ່າທຳນຽມ, ລາຄາຕໍ່ຫົວໜ່ວຍກີບ/ຕາແມັດ | ຄ່າບໍລິການ, ລາຄາຕໍ່ຫົວໜ່ວຍກີບ/ຕາແມັດ | ໝາຍເຫດ |
|---|---|---|---|---|
| 1 | ສຳລັບໂຄງການບໍ່ແຮ່ | 1.200 | 650 | |
| 2 | ສຳລັບໂຄງການຜະລິດກະສິກຳ | 500 | 300 | |
| 3 | ສຳລັບການສ້າງຕັ້ງໂຮງງານ | 1.200 | 650 | |

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານລັດມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງບຸກຄົນ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ຕໍ່ວຽກງານຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປ່າໄມ້ ທີ່ການຈັດຕັ້ງມອບໝາຍໃຫ້;
4. ປອມແປງເອກະສານ, ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດກ່ຽວກັບທີ່ດິນປ່າໄມ້;
5. ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ ແລະ ທີ່ດິນປ່າຜະລິດ;
6. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ມີພຶດຕິກຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 27 ຂໍ້ຫ້າມສຳລັບນິຕິບຸກຄົນ ແລະ ຜູ້ປະກອບການ**

ຫ້າມສຳລັບນິຕິບຸກຄົນ ແລະ ນັກທຸລະກິດມີພຶດຕິກຳດັ່ງນີ້:

1. ດຳເນີນການສຳຫຼວດ ແລະ ຈັບຈອງທີ່ດິນປ່າໄມ້ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;
2. ບຸກເບີກທີ່ດິນປ່າໄມ້ນອກເຂດທີ່ອະນຸຍາດ;
3. ປອມແປງເອກະສານກ່ຽວກັບທີ່ດິນປ່າໄມ້;

4. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາຊົນ;
5. ມີພຶດຕິກຳອື່ນໆ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
6. ໃຫ້ສິນບົນແກ່ພະນັກງານ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

**ມາດຕາ 28 ຂໍ້ຫ້າມສຳລັບບຸກຄົນທົ່ວໄປ**

ຫ້າມບຸກຄົນທົ່ວໄປ ມີພຶດຕິກຳດັ່ງນີ້:

1. ເຂົ້າໄປຕັ້ງຖິ່ນຖານຢູ່ໃນເຂດທີ່ດິນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຫຼື ທຳການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ທຳລາຍປ່າໄມ້ດ້ວຍການບຸກລຸກ, ບຸກເບີກຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ການໄມ້ ຫຼື ນຳໃຊ້ສານເຄມີໃຫ້ຕົ້ນໄມ້ຕາຍ ແລະ ດ້ວຍການທຳລາຍອື່ນໆ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
3. ຈັບຈອງຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້;
4. ຮ່ວມມືກັບນັກທຸລະກິດ, ພະນັກງານ ຫຼື ເຈົ້າໜ້າທີ່ໃນການລັກລອບຕັດໄມ້, ບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
5. ປອມແປງເອກະສານ, ຕາປະທັບ ແລະ ອື່ນໆ;
6. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;
7. ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
8. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຊື້-ຂາຍທີ່ດິນປ່າໄມ້;
9. ມີພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 7
## ອົງການຄຸ້ມຄອງ ແລະ ກວດກາທີ່ດິນປ່າໄມ້

**ມາດຕາ 29 ອົງການຄຸ້ມຄອງ ທີ່ດິນປ່າໄມ້**

ອົງການຄຸ້ມຄອງທີ່ດິນປ່າໄມ້ປະກອບມີ:

1. ພະແນກກະສິກຳ ແລະ ປ່າໄມ້ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

1. ເປັນຜູ້ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ທີ່ດິນປ່າໄມ້ໃນທົ່ວແຂວງຄຳມ່ວນໃຫ້ຖືກຕ້ອງຕາມເປົ້າໝາຍ;
2. ເປັນເຈົ້າການໃນການປະສານສົມທົບ ກັບບັນດາພະແນກການ ແລະ ເມືອງທີ່ກ່ຽວຂ້ອງ ເພື່ອລົງສຳຫຼວດຈັດສັນກຳນົດແບ່ງເຂດ ແລະ ນຳພາການປັກຫຼັກໝາຍທີ່ດິນປ່າໄມ້ໃນທົ່ວແຂວງຄຳມ່ວນ;
3. ເຂົ້າຮ່ວມຄົ້ນຄ້ວາ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນຜົນການກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ພ້ອມທັງຕິດຕາມກວດກາການນຳໃຊ້ທີ່ດິນປ່າໄມ້ຂອງນັກລົງທຶນ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງ ປະເທດ ໃຫ້ຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ;

4. ເປັນຜູ້ຮັບຜິດຊອບໂດຍກົງໃນການສັງລວມ ແລະ ນຳສະເໜີຕໍ່ສະພາປະຊາຊົນແຂວງ ຄຳມ່ວນ ເພື່ອອະນຸຍາດຫັນປ່ຽນປະເພດດິນປ່າໄມ້ໄປເປັນດິນປະເພດອື່ນ;
5. ສະເໜີລາຍງານສະພາບການເຄື່ອນໄຫວວຽກງານ ຕໍ່ອົງການປົກຄອງ ແລະ ສະພາປະຊາຊົນແຂວງ ຄຳມ່ວນ ເພື່ອຂໍທິດຊີ້ນຳສຳລັບການຈັດຕັ້ງປະຕິບັດໃນແຕ່ລະໄລຍະ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

1. ປະສານສົມທົບກັບອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ເພື່ອຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;
2. ເປັນເຈົ້າການໃນການເຂົ້າຮ່ວມລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກໝາຍທີ່ດິນປ່າໄມ້ໃຫ້ຊັດເຈນ;
3. ເຂົ້າຮ່ວມຄົ້ນຄ້ວາກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້, ພ້ອມຕິດຕາມກວດກາການນຳໃຊ້ທີ່ດິນປ່າໄມ້ຂອງນັກລົງທຶນ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ;
4. ສະເໜີລາຍງານຕໍ່ການຈັດຕັ້ງທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ ເພື່ອຂໍທິດຊີ້ນຳສຳລັບການຈັດຕັ້ງປະຕິບັດ.

**ມາດຕາ 32 ອົງການກວດກາ**

ອົງການກວດກາທີ່ດິນປ່າໄມ້ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ດິນປ່າໄມ້ ທີ່ໄດ້ກຳນົດໄວ້ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ແມ່ນສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 33 ເນື້ອໃນຂອງການກວດກາ**

ເນື້ອໃນຂອງການກວດກາມີດັ່ງນີ້:

1. ກວດກາຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ພະນັກງານ ທີ່ເຄື່ອນໄຫວວຽກງານຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້;
2. ກວດກາກ່ຽວກັບການຈັດຕັ້ງປະຕິບັດບັນດານິຕິກຳ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້;
3. ກວດກາການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ນິຕິກຳກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້.

**ມາດຕາ 34 ຮູບແບບຂອງການກວດກາ**

ການກວດກາທີ່ດິນປ່າໄມ້ ມີສາມຮູບແບບຄືດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ: ແມ່ນການກວດກາຕາມແຜນການ ຢ່າງເປັນປະຈຳ ແລະມີກຳນົດເວລາແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ລ່ວງໜ້າ: ແມ່ນການກວດການອກແຜນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາ ແບບກະທັນຫັນ: ແມ່ນການກວດກາໂດຍຮີບດ່ວນ ແລະ ບໍ່ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

ຮູບການກວດກາ ໃຫ້ດຳເນີນການກວດກາເອກະສານ ແລະ ການລົງກວດກາໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 35 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ: ໃນການປົກປັກຮັກສາ ແລະ ພັດທະນາທີ່ດິນປ່າໄມ້, ການຟື້ນຟູທີ່ດິນປ່າໄມ້ ແລະ ປ້ອງກັນການບຸກລຸກທຳລາຍທີ່ດິນປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ.

### ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມຂໍ້ຕົກລົງສະບັບນີ້ ເປັນຕົ້ນບຸກລຸກ, ບຸກເບີກ, ຈັບຈອງ, ຖາກຖາງ, ຈູດ, ທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້ຈະຖືກປັບໃໝດັ່ງນີ້:

1. ສອງລ້ານກີບຕໍ່ເຮັກຕາ ບວກກັບໜຶ່ງເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳ ລັບການລະເມີດຄັ້ງທີໜຶ່ງ;
2. ສາມລ້ານກີບຕໍ່ເຮັກຕາ ບວກກັບສາມເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳລັບການລະເມີດຄັ້ງທີສອງ;
3. ຫ້າລ້ານກີບຕໍ່ເຮັກຕາ ບວກກັບຫ້າເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຕາມການປະເມີນຕົວຈິງ ສຳລັບການລະເມີດສາມຄັ້ງຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ນອກຈາກມາດຕະການ ທີ່ກ່າວມາຂ້າງເທິງນັ້ນແລ້ວ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັດໄໝ ແລະ ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 37 ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ຄຳມ່ວນ ສົມທົບກັບພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ອົງການປົກຄອງເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ອົງການປົກຄອງແຕ່ລະບ້ານ ພາຍໃນແຂວງ ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ສັງຄົມໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ, ປະສານສົມທົບກັບບັນດາພະແນກການ, ອົງການທຽບເທົ່າ, ຫ້ອງການຂັ້ນເມືອງ, ອົງການປົກຄອງບ້ານ ແລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 38 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ວັນໄຊ ພອງສະຫວັນ